ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1502 /ກປ

ນະຄອນຫລວງວຽງຈັນ, ວັນທີ 23 JUN 2011

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຈຸດສອບຖາມ ກ່ຽວກັບ ສຸຂານາໄມ ແລະ ສຸຂານາໄມພືດ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148 /ນຍ, ລົງວັນທີ 10/05/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 363/ນຍ, ລົງວັນທີ 19/08/2010 ວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ.
- ອີງຕາມບົດບັນທຶກກອງປະຊຸມຮ່ວມລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ກັບກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການກະກຽມເຂົ້າເປັນສະມາຊິກອົງການ ການຄ້າໂລກ ສະບັບເລກທີ 0333/ກປ, ລົງວັນທີ 10/05/2011 ແລະ ສະບັບເລກທີ 0474/ອຄ, ລົງວັນທີ 09/05/2011.

**ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຈຸດສອບຖາມກ່ຽວກັບສຸຂານາໄມ ແລະ ສຸຂານາໄມພືດ, ເພື່ອສ້າງໃຫ້ເປັນບ່ອນສັງລວມ ແລະ ສະໜອງຂໍ້ມູນກ່ຽວກັບມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ຂອງ ສປປ ລາວ ແນໃສ່ເຮັດໃຫ້ການຄຸ້ມຄອງສິນຄ້າກະສິກຳ ໃຫ້ມີຄວາມໂປ່ງໃສ, ກະທົບຕໍ່ການຄ້າໃຫ້ໜ້ອຍທີ່ສຸດ ແລະ ເປັນການປະກອບສ່ວນ ເພື່ອປັບປຸງສະພາບແວດລ້ອມ ທາງດ້ານທຸລະກິດກະສິກຳໃຫ້ດີຂຶ້ນ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ຈຸດສອບຖາມສຸຂານາໄມ ແລະ ສຸຂານາໄມພືດ ແມ່ນການຈັດຕັ້ງໜຶ່ງ ທີ່ສັງກັດຢູ່ ໃນໂຄງປະກອບການຈັດຕັ້ງ ຂອງກົມແຜນການ ກະຊວງກະສິກຳ ແລະ ປ່າໄມ້, ມີພາລະບົດບາດຕອບຄຳຖາມ ແລະ ສະໜອງຂໍ້ມູນຂ່າວສານຕ່າງໆ ກ່ຽວກັບມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຄວາມສົນໃຈ ທັງພາຍໃນ ແລະ ຕ່າງປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

3.1 ຕິດຕາມ, ສັງລວມຄຳຖາມຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ດ້ວຍການປະສານສົມທົບ ກັບຈຸດປະສານງານ ເພື່ອສະໜອງຄຳຕອບ ທີ່ສອດຄ່ອງຕາມຫຼັກການພື້ນຖານ ທີ່ໄດ້ກຳນົດໄວ້ໃນ ມາດຕາ 3, 5 ແລະ 6 ຂອງດຳລັດ ສະບັບເລກທີ 363/ນຍ, ລົງວັນທີ 19 ສິງຫາ 2010;

3.2 ຕອບຄຳຖາມ ແລະ ສະໜອງຂໍ້ມູນ ຈາກພາກລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດດ້ວຍຄວາມໂປ່ງໃສ ຕາມກຳນົດເວລາທີ່ເໝາະສົມ ກ່ຽວກັບບັນຫາຕ່າງໆ ດັ່ງນີ້:

ກ. ບັນດາກົດໝາຍ, ນິຕິກຳ, ລະບຽບການດ້ານເຕັກນິກ ແລະ ມາດຕະຖານຕ່າງໆ ທີ່ກ່ຽວຂ້ອງກັບການນຳໃຊ້ມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ທີ່ຖືກຮັບຮອງ ຫລື ປະກາດໃຊ້ຢ່າງ ເປັນທາງການ ຢູ່ພາຍໃນ ສປປ ລາວ ແລະ ຕ່າງປະເທດ;

ຂ. ມາດຕະການຄວບຄຸມຄຸນນະພາບ ຂອງການຜະລິດ, ການກັກກັນ, ການກວດກາຢັ້ງຢືນ, ການຮັບຮອງກ່ຽວກັບຢາສັດ, ທາດເພີ່ມໃນອາຫານຄົນ ແລະ ອາຫານສັດ ແລະ ຢາປາບສັດຕູພືດ;

ຄ. ການດຳເນີນການປະເມີນຄວາມສ່ຽງ, ປັດໃຈທີ່ນຳມາພິຈາລະນາລວມເຖິງການກຳນົດລະດັບຄວາມເໝາະສົມ ໃນການປ້ອງກັນດ້ານສຸຂານາໄມ ແລະ ສຸຂານາໄມພືດ;

ງ. ການເຂົ້າເປັນສະມາຊິກ ຂອງ ສປປ ລາວ ກັບອົງການຈັດຕັ້ງສາກົນ ແລະ ຂົງເຂດ ຫລື ການຮ່ວມມືສອງຝ່າຍ ຫລື ຫລາຍຝ່າຍ ທີ່ກ່ຽວຂ້ອງກັບ ສັນຍາວ່າດ້ວຍສຸຂານາໄມ ແລະ ສຸຂານາໄມພືດ;

ຈ. ລາຍລະອຽດ ກ່ຽວກັບ ທີ່ຕັ້ງຂອງຈຸດສອບຖາມ, ຈຸດປະສານງານ, ບຸກຄົນ ຫລື ພະນັກງານທີ່ຮັບຜິດຊອບ ລວມເຖິງຂໍ້ມູນຕ່າງໆ ກ່ຽວກັບເອກະສານທີ່ຖືກພິມເຜີຍແຜ່ ຫລື ສະຖານທີ່ສາມາດຂໍເອກະສານຕ່າງໆ ທີ່ກ່ຽວຂ້ອງ ຕາມຂອບຂອງຂໍ້ຕົກລົງສະບັບນີ້ກຳນົດ;

3.3 ປະສານງານ, ຮ່ວມມືກັບໜ່ວຍງານແຈ້ງຂໍ້ມູນ ແລະ ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ ການຄ້າໂດຍການສ້າງລະບອບການສ່ອງແສງລາຍງານ ຊຶ່ງກັນ ແລະ ກັນ ຢ່າງເປັນປົກກະຕິ;

3.4 ສ້າງຖານຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ໃຫ້ເປັນລະບົບ;

3.5 ຈັດຝຶກອົບຮົມໃຫ້ບຸກຄະລາກອນ ຂອງຈຸດສອບຖາມ ແລະ ຈຸດປະສານງານ ເພື່ອຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ສູງຂຶ້ນເທື່ອລະກ້າວ;

3.6 ຄົ້ນຄວ້າ ແລະ ສະເໜີປັບປຸງກົນໄກການປະສານງານ ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ;

3.7 ລາຍງານເປັນປະຈຳ ໃຫ້ຄະນະນຳກະຊວງກະສິກຳ ແລະ ປ່າໄມ້ ຮັບຮູ້ກ່ຽວກັບການເຄື່ອນໄຫວຂອງຈຸດສອບຖາມ;

3.8 ຊຸກຍູ້ຜູ້ປະກອບການ ໃນການນຳໃຊ້ຂໍ້ມູນ ແລະ ມາດຕະຖານຕ່າງໆ ເພື່ອພັດທະນາການຜະລິດ ແລະ ສົ່ງອອກ ໃຫ້ມີຄວາມປອດໄພ ຖືກຕາມເງື່ອນໄຂ ດ້ານສຸຂານາໄມ ແລະ ສຸຂານາໄມພືດ ຂອງຕະຫຼາດຕ່າງປະເທດ. ພ້ອມທັງເປັນເຈົ້າການ ເພື່ອສະໜອງຂໍ້ມູນໃຫ້ແກ່ນັກຄົ້ນຄວ້າ ເພື່ອສຶກສາຜົນກະທົບ ຂອງການນຳໃຊ້ ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ໃນແຕ່ລະໄລຍະ;

3.9 ປະຕິບັດໜ້າທີ່ອື່ນໆ ຕາມການຕົກລົງ ແລະ ມອບໝາຍຈາກຂັ້ນເທິງ.

**ມາດຕາ 4. ຂອບເຂດສິດ**

4.1 ຄຸ້ມຄອງພະນັກງານ, ຈັດຕັ້ງເພື່ອແບ່ງຄວາມຮັບຜິດຊອບ ຕາມຄວາມຮູ້ຄວາມສາມາດຂອງພະນັກງານຂອງຕົນ;

4.2 ຕິດຕໍ່ພົວພັນໂດຍກົງກັບໜ່ວຍງານແຈ້ງຂໍ້ມູນ ດ້ານສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ເຮັດວຽກຢ່າງໃກ້ສິດກັບ ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ ການຄ້າ;

4.3 ຕິດຕໍ່ພົວພັນໂດຍກົງກັບພາກສ່ວນກ່ຽວຂ້ອງດ້ານສຸຂານາໄມ ແລະ ສຸຂານາໄມພືດ ທັງພາຍໃນ ແລະ ຕ່າງປະເທດ;

4.4 ມີສິດສະໜອງຂໍ້ມູນ ກ່ຽວກັບມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ໃຫ້ແກ່ພາກສ່ວນທີ່ຕ້ອງການ;

4.5 ຊີ້ນຳ ແລະ ຄົ້ນຄ້ວາຫາຄຳຕອບ ຈາກຈຸດປະສານງານ ທີ່ຕັ້ງຂຶ້ນຢູ່ພາຍໃນກົມກ່ຽວຂ້ອງ ແລະ ຈາກຂະແໜງການອື່ນ ທີ່ກ່ຽວຂ້ອງກັບການນຳໃຊ້ມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມການແບ່ງຄວາມຮັບຜິດຊອບ;

4.6 ເກັບຄ່າບໍລິການ ກ່ຽວກັບການສະໜອງຂໍ້ມູນຂ່າວສານ ດ້ານສຸຂານາໄມ ແລະ ສຸຂານາໄມພືດ ເຊັ່ນ: ຄ່າພິມ, ສຳເນົາ, ຈັດສົ່ງເອກະສານ ຫລື ຄ່າບໍລິການອື່ນໆ ທີ່ກ່ຽວກັບການສະໜອງຂໍ້ມູນ ຕາມທີ່ກຳນົດໄວ້ ໃນລະບຽບການສະເພາະ ໃນແຕ່ລະໄລຍະ ທີ່ບໍ່ຂັດກັບ ລະບຽບກົດໝາຍ ຂອງ ສປປ ລາວ;

4.7 ເຂົ້າຮ່ວມກອງປະຊຸມ, ສຳມະນາ ຫລື ການຈັດຝຶກອົບຮົມ ດ້ານວິຊາການ ທີ່ຕິດພັນກັບ ວຽກງານການ ສອບຖາມ ຫລື ການແຈ້ງຂໍ້ມູນ ກ່ຽວກັບສຸຂານາໄມ ແລະ ສຸຂານາໄມພືດ;

4.8 ໂຄສະນາເຜີຍແຜ່ ຂໍ້ມູນຂ່າວສານ ກ່ຽວກັບ ການນຳໃຊ້ ມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ຂອງ ສປປ ລາວ ແລະ ສາກົນ ໃຫ້ແກ່ ສາທາລະນະຊົນຮັບຊາບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4.9 ສະເໜີບັນຫາຕ່າງໆ ພ້ອມວິທີແກ້ໄຂ ກ່ຽວກັບ ຄວາມຮັບຜິດຊອບ ຂອງຕົນຕໍ່ຂັ້ນເທິງ;

4.10 ຕັດສິນບັນຫາ, ລົງຄວາມເຫັນ ແລະ ຢັ້ງຢືນເອກະສານ ທີ່ກ່ຽວພັນກັບພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຈຸດປະສານງານ.

## ໝວດທີ III
## ໂຄງຮ່າງການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ຈຸດສອບຖາມສຸຂານາໄມ ແລະ ສຸຂານາໄມພືດ ມີໂຄງປະກອບກົງຈັກ ທີ່ຊັດເຈນ ມີການແບ່ງຄວາມຮັບຜິດຊອບໃຫ້ແຕ່ລະບຸກຄົນ ຫລື ທີມງານຂອງຕົນຢ່າງຊັດເຈນ.

ຈຸດສອບຖາມ ຕ້ອງມີຈຸດປະສານງານ ກັບ ກົມປູກຝັງ, ກົມລ້ຽງສັດແລະການປະມົງ ກະຊວງກະສິກຳ ແລະ ປ່າໄມ້, ກົມອາຫານ ແລະ ຢາກະຊວງສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນ

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

ຈຸດສອບຖາມ ປະກອບດ້ວຍບຸກຄະລາກອນ ທີ່ມີຄວາມຮູ້ຄວາມສາມາດ ໃນການໃຊ້ພາສາຕ່າງປະເທດເຊັ່ນ: ຝຣັ່ງ ຫລື ອັງກິດ, ຮູ້ປະສານງານ ແລະ ຕອບຄຳຖາມ ກ່ຽວກັບ ມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ໄດ້ເປັນຢ່າງດີ ໂດຍມີຫົວໜ້າ, ຮອງ ແລະ ພະນັກງານຊ່ວຍວຽກຈຳນວນໜຶ່ງ. ມອບໃຫ້ກົມແຜນການ ກະຊວງກະສິກຳ ແລະ ປ່າໄມ້ ຄົ້ນຄວ້າໂຄງປະກອບບຸກຄະລາກອນຂອງຈຸດສອບ ຖາມ ແລະ ສະເໜີຕໍ່ລັດຖະມົນຕີວ່າການ ແຕ່ງຕັ້ງຢ່າງເປັນທາງການ.

## ໝວດທີ IV
## ໜ້າທີ່ຂອງຈຸດປະສານງານ ແລະ ການປະສານງານກັບຂະແໜງການອື່ນທີ່ກ່ຽວຂ້ອງ

**ມາດຕາ 7. ໜ້າທີ່ຂອງຈຸດປະສານງານ**

7.1 ສັງລວມ, ຄົ້ນຄວ້າເພື່ອຕອບຄຳຖາມ ແລະ ລາຍງານ ກ່ຽວກັບມາດຕະການສຸຂານາໄມ ແລະ ສຸຂານາໄມ ພືດ ທີ່ກຳລັງມີຜົນບັງຄັບໃຊ້ຢູ່ ຫລື ມາດຕະການທີ່ກຳລັງຮ່າງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ແກ່ຈຸດສອບຖາມ ແລະ ໜ່ວຍງານແຈ້ງຂໍ້ມູນ;

7.2 ລາຍງານຂໍ້ມູນ ຂອງສິນຄ້າກະສິກຳ ຫລື ອາຫານ ທີ່ກ່ຽວຂ້ອງກັບການຄ້າ ໃຫ້ແກ່ຈຸດສອບຖາມ;

7.3 ເຂົ້າຮ່ວມກອງປະຊຸມ, ສຳມະນາ, ການຝຶກອົບຮົມ ຫລື ການໂຄສະນາກ່ຽວກັບການຮັບ, ການຕອບຄຳຖາມ ຫລື ການແຈ້ງຂໍ້ມູນດ້ານສຸຂານາໄມ ແລະ ສຸຂານາໄມພືດ;

7.4 ສະເໜີ ຂໍການຊ່ວຍເຫລືອ ຫລື ການສະໜັບສະໜູນ ທາງດ້ານວິຊາການຈາກຈຸດສອບຖາມ ແລະ ຈາກ ແຫລ່ງອື່ນໆ;

7.5 ຊ່ວຍຄະນະກຳມະການ ກົດລະຫັດອາຫານແຫ່ງຊາດ ໃນການກຳນົດ ມາດຕະຖານແຫ່ງຊາດ ທີ່ກ່ຽວຂ້ອງກັບ ຄວາມປອດໄພ ຈາກສານຕົກຄ້າງ ໃນອາຫານຄົນ, ອາຫານສັດ, ຜະລິດຕະພັນສິນຄ້າກະສິກຳ ລວມເຖິງການກຳນົດ ລະດັບການປ້ອງກັນ ດ້ານສຸຂານາໄມ ແລະ ສຸຂານາໄມພືດ ທີ່ເໝາະສົມ;

7.6 ກົມແຜນການເປັນໃຈກາງ ປະສານສົມທົບກັບກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳ ແລະ ປ່າໄມ້ ລວມທັງ ກົມອາຫານແລະຢາ ກະຊວງ ສາທາລະນະສຸກ ເພື່ອຈັດຕັ້ງເຄື່ອນໄຫວວຽກງານຂອງຈຸດປະສານງານ ສຸຂານາໄມ ແລະ ສຸຂານາໄມພືດ ໃຫ້ໄດ້ຮັບຜົນດີ.

**ມາດຕາ 8. ການປະສານງານກັບຂະແໜງການອື່ນທີ່ກ່ຽວຂ້ອງ**

8.1 ຈຸດສອບຖາມ ໄດ້ປະສານສົມທົບຢ່າງໃກ້ສິດ ກັບໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ຊຶ່ງຕັ້ງຢູ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຮັບປະກັນໃຫ້ຂໍ້ມູນ ກ່ຽວກັບການນຳໃຊ້ ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຂອງ ສປປ ລາວ ຖືກເຜີຍແຜ່ຕໍ່ອົງການການຄ້າໂລກ ຫລື ອົງການຈັດຕັ້ງສາກົນຮັບຊາບ;

8.2 ໃນການປະສານງານກັບອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດນັ້ນໃຫ້ຖືເອົາຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ເປັນບ່ອນປະສານງານ ເພື່ອແລກປ່ຽນບົດຮຽນ ໃນການຄຸ້ມຄອງຂໍ້ມູນ ຫລື ຮັບຕອບຄຳຖາມຕ່າງໆ ຂອງບຸກຄົນ ນິຕິບຸກຄົນ ຫລື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດໃຫ້ຖືກຕ້ອງ, ວ່ອງໄວ ແລະ ຫລີກເວັ້ນການເຮັດວຽກຊ້ຳຊ້ອນກັນ;

8.3 ສຳລັບ ການປະສານງານ ກັບຂະແໜງການຕົນ ໃນລະດັບທ້ອງຖິ່ນ ແລະ ຂະແໜງອື່ນທີ່ກ່ຽວຂ້ອງ ນອກຈາກສອງຂະແໜງການ ທີ່ກ່າວມາຂ້າງເທິງນັ້ນແລ້ວ, ໃຫ້ຈຸດສອບຖາມຕິດຕາມ, ພັດທະນາ ແລະ ສ້າງກົນໄກປະສານງານ ກັບຂະແໜງການອື່ນ ທີ່ເຫັນວ່າມີການພົວພັນເຖິງການຮັບ, ການຕອບຄຳຖາມ ກ່ຽວກັບມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຂອງຕົນ ຕາມຄວາມຈຳເປັນໃນແຕ່ລະໄລຍະ;

8.4 ການປະສານ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ແມ່ນມີຈຸດປະສົງເພື່ອຕິດຕາມ ແລະ ໃຫ້ຮັບຮູ້ ກ່ຽວກັບການສ້າງ, ການປ່ຽນແປງ ແລະ ປັບປຸງ ບັນດານິຕິກຳທີ່ພົວພັນກັບ ມາດຕະການ ສຸຂານາໄມ ແລະ ສຸຂານາໄມພືດ ຢູ່ໃນຄວາມຮັບຜິດຊອບ ຂອງແຕ່ລະຂະແໜງການ ໃຫ້ສາມາດຮັບໃຊ້ ຕອບຄຳຖາມ ຫລື ສະໜອງຂໍ້ມູນ ຂອງຈຸດສອບຖາມ ໃຫ້ມີປະສິດທິຜົນດີ ແລະ ເປັນບ່ອນຊ່ວຍສົ່ງຄຳຖາມຄືນໃຫ້ແກ່ຈຸດສອບຖາມ ໃນກໍລະນີທີ່ໄດ້ຮັບຄຳຖາມໂດຍກົງຈາກເຈົ້າຂອງຄຳຖາມ.

## ໝວດທີ V
## ແບບແຜນວິທີເຮັດວຽກ

**ມາດຕາ 9.** ຈຸດສອບຖາມສຸຂານາໄມ ແລະ ສຸຂານາໄມພືດ ແລະ ດຳເນີນງານ ຕາມຫຼັກການ ດັ່ງນີ້:

9.1 ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ສົມທົບກັບການປະຕິບັດລະບອບ ຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງ ບົນພື້ນຖານມີການແບ່ງງານກັນຢ່າງລະ ອຽດຈະແຈ້ງໃນໝູ່ຄະນະ;

9.2 ຫົວໜ້າກົມແຜນການມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະຈຸດສອບຖາມສຸຂານາໄມ ແລະ ສຸຂານາໄມພືດ ກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າກົມແຜນການມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບ ໗

ວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍຂອງຫົວໜ້າກົມແຜນການ;

9.3 ພົວພັນ ແລະ ປະສານສົມທົບກັບບັນດາ ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳ ແລະ ປ່າໄມ້, ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ແລະ ຈຸດປະສານງານຕ່າງໆ ທີ່ກ່ຽວ ຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດຕາມເປົ້າໝາຍທີ່ວາງໄວ້;

9.4 ຈຸດສອບຖາມ ສາມາດຂໍຂໍ້ມູນ ທັງສອບຖາມໂດຍກົງ ຫລື ໂດຍເປັນຕົວແທນ ໃຫ້ແກ່ພາກສ່ວນຕ່າງໆ ທັງພາກລັດ ແລະ ເອກະຊົນ ຕາມການຮ້ອງຂໍ ກ່ຽວກັບ ມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ຈາກອົງການຈັດຕັ້ງສາກົນ ຫລື ຈາກປະເທດອື່ນໆ ທີ່ກຳລັງນຳໃຊ້;

9.5 ການຮັບຄຳຖາມ, ການຕອບຄຳຖາມ, ການຂໍຂໍ້ມູນ, ການສະໜອງຂໍ້ມູນ ແລະ ປະສານງານກັບຈຸດປະສານງານອື່ນທີ່ກ່ຽວຂ້ອງ, ມີການບັນທຶກ ເຂົ້າໃນລະບົບຮັບຄຳຖາມ, ຄົ້ນຄວ້າ ເພື່ອໃຫ້ຄຳຕອບໃນກໍລະນີທີ່ເຫັນວ່າຄຳຖາມທີ່ຈຸດສອບຖາມບໍ່ສາມາດຕອບໄດ້ ຕ້ອງສົ່ງຄຳຖາມດັ່ງກ່າວໄປໃຫ້ຈຸດປະສານງານທີ່ກ່ຽວຂ້ອງ ຢ່າງເປັນລາຍລັກອັກສອນ ພ້ອມທັງກຳນົດເວລາໃຫ້ ສົ່ງຄຳເຫັນຢ່າງຊ້າບໍ່ໃຫ້ກາຍ 5 ວັນ ນັບແຕ່ມື້ທີ່ຈຸດສອບຖາມ ມີຄຳຕອບ ຫລື ໄດ້ຮັບຄວາມເຫັນ ຈາກຈຸດປະສານງານກ່ຽວ ຂ້ອງແລ້ວ;

9.6 ປະຕິບັດລະບອບປະຊຸມ, ສ່ອງແສງລາຍງານປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ, ສະຫລຸບສັງລວມສະພາບການຮອບດ້ານເພື່ອລາຍງານໃຫ້ຂັ້ນເທິງຊາບຕາມເວລາທີ່ໄດ້ກຳນົດໄວ້.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 10. ງົບປະມານ ແລະ ກາປະທັບ**

ຈຸດສອບຖາມສຸຂານາໄມ ແລະ ສຸຂານາໄມພືດ ມີງົບປະມານ, ກາປະທັບຂອງກົມແຜນການ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ກົມແຜນການ, ກະຊວງກະສິກຳ ແລະ ປ່າໄມ້ ເປັນໃຈກາງໃນການເຜີຍແຜ່ ຂໍ້ຕົກລົງສະບັບນີ້ ໃຫ້ອົງການຈັດຕັ້ງທີ່ຄຸ້ມຄອງ ວຽກງານສຸຂານາໄມ ແລະ ສຸຂານາໄມພືດ ຮັບຊາບ ແລະ ເປັນເຈົ້າການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້
ລັດຖະມົນຕີ

ສີຕາເຮັ້ງ ຣາຊະພົນ

## ການອະທິບາຍສັບ
## ກ່ຽວກັບວຽກງານສຸຂານາໄມ ແລະ ສຸຂານາໄມພືດ

- ຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດແມ່ນ ນິຕິກຳທີ່ຖືກຮັບຮອງ ຫຼື ກຳລັງຮ່າງ ຂອງ ສປປ ລາວ ຫລື ຂອງຕ່າງປະເທດ ທີ່ແນໃສ່ຮັກສາສຸຂະພາບ ແລະ ຊີວິດການເປັນຢູ່ຂອງຄົນ, ສັດ ແລະ ພືດ;
- ຂັ້ນຕອນໃນການຄວບຄຸມ, ກວດກາການຜະລິດ, ການປ້ອງກັນ ແລະ ການອະນຸມັດກ່ຽວກັບ ທາດເພີ່ມໃນອາຫານ, ລະດັບຂັ້ນຕອນທີ່ອະນຸຍາດຂອງສານເຄມີທີ່ຕົກຄ້າງ;
- ວິທີການ ແລະ ປັດໃຈ ທີ່ນຳໃຊ້ໃນການປະເມີນຄວາມສ່ຽງ;
- ການກຳນົດ ກ່ຽວກັບລະດັບການປົກປ້ອງ ດ້ານສຸຂານາໄມ ແລະ ສຸຂານາໄມພືດ ທີ່ເໝາະສົມ;
- ເປັນສະມາຊິກ ແລະ ເຂົ້າຮ່ວມຂອງ ສປປ ລາວ ໃນສັນຍາ ຫຼື ຂໍ້ຕົກລົງໃນຂອບເຂດສອງຝ່າຍ, ຫຼາຍຝ່າຍ ຫຼື ພາກພື້ນ ທີ່ຕິດພັນກັບວຽກ ສຸຂານາໄມ ແລະ ສຸຂານາໄມພືດ ແລະ ການປະຕິບັດສັນຍາດັ່ງກ່າວ;
- ມາດຕະຖານ, ຂໍ້ກຳນົດ ແລະ ຄຳແນະນຳ ຂອງຄະນະກຳມະທິການ ກົດລະຫັດອາຫານສາກົນ, ອົງການສຸຂະພາບສັດສາກົນ, ອົງການສົນທິສັນຍາ ປ້ອງກັນພືດສາກົນ ແລະ ຂອງອົງການຈັດຕັ້ງອື່ນ ທີ່ຕິດພັນກັບ ສຸຂະພາບຄົນ, ສັດ ແລະ ພືດ;
- ຊື່ ແລະ ທີ່ຢູ່ ຂອງຂະແໜງການກ່ຽວຂ້ອງ ຫຼື ຜູ້ຮັບຜິດຊອບ ດ້ານສຸຂານາໄມ ແລະ ສຸຂານາໄມພືດ;
- ຊື່ ແລະ ທີ່ຢູ່ ເພື່ອຕິດຕໍ່ ຈຸດສອບຖາມຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ຂອງຕ່າງປະເທດ.

**ສຸຂານາໄມ** ໝາຍເຖິງ ຄວາມສະອາດທາງດ້ານສຸຂາອະນາໄມ ແລະ ຄວາມປອດໄພ ກ່ຽວກັບສານຕົກຄ້າງ ແລະ ພະຍາດ ທີ່ມີຜົນເສຍຫາຍທາງດ້ານສຸຂະພາບຂອງຄົນ ແລະ ສັດ;

**ສຸຂານາໄມພືດ** ໝາຍເຖິງ ພືດ, ຜະລິດຕະພັນຈາກພືດໃຫ້ມີຄວາມສະອາດ ແລະ ປອດໄພທີ່ເກີດມາຈາກຢາປາບສັດຕູພືດ, ແມງໄມ້ສັດຕູພືດ ແລະ ພະຍາດພືດ;

**ມາດຕະການ** ໝາຍເຖິງ ກົດໝາຍ, ດຳລັດ, ລະບຽບການ, ຄຳສັ່ງແນະນຳ, ມາດຖະການ, ແຈ້ງການ, ຂໍ້ກຳນົດການດຳເນີນງານໃນການຄວບຄຸມ ແລະ ກວດກາ ລວມທັງມາດຖານການຜະລິດ, ມີການກວດກາຢັ້ງຢືນເພື່ອຮັບຮອງຄຸນນະພາບ ແລະ ສຸຂານາໄມ, ການກັກກັນ, ການກຳນົດ ວິທີການຂົນສົ່ງພືດ ແລະ ສັດ, ການລາຍງານ ແລະ ເກັບກຳສະຖິຕິ, ຂັ້ນຕອນການເກັບຕົວຢ່າງ, ວິທີການປະເມີນຄວາມສ່ຽງ, ເງື່ອນໄຂສຳລັບການຫຸ້ມຫໍ່ ແລະ ການຕິດກາໝາຍ ທີ່ຕິດພັນກັບຄວາມປອດໄພຂອງອາຫານ ແລະ ຜະລິດຕະພັນພືດ ແລະ ສັດ.

**ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ** ໝາຍເຖິງ ມາດຕະການຕ່າງໆຂອງລັດຖະບານທີ່ສ້າງຂຶ້ນ ເພື່ອປົກປ້ອງຊີວິດ ຫລື ສຸຂະພາບຂອງຄົນ, ສັດ ແລະ ພືດ ຈາກຄວາມສ່ຽງທີ່ອາດເກີດຈາກ ການນຳເຂົ້າ ສົ່ງອອກ ສິນຄ້າກະສິກຳ ແລະ ອາຫານ ຊຶ່ງປະກອບມີ:

- ຄວາມສ່ຽງເກີດຂຶ້ນຈາກພະຍາດພືດ, ພະຍາດສັດ ແລະ ພະຍາດສັດຕິດຕໍ່ສູ່ຄົນ;
- ຄວາມສ່ຽງ ໃນການນຳໃຊ້ ສານປະສົມໃນອາຫານຄົນ, ອາຫານສັດ ທີ່ເກີນອັດຕາສ່ວນທີ່ຄວນໃຊ້, ຢາປາບສັດຕູພືດ, ຢາຂ້າແມງໄມ້ ແລະ ສານພິດທີ່ອາດປົນເປື້ອນໃນ ອາຫານ ແລະ ເຄື່ອງດື່ມ;
- ຄວາມສ່ຽງຈາກສັດ, ພືດ ຫລື ຜະລິດຕະພັນທີ່ອາດເປັນພາຫະນຳເຊື້ອພະຍາດຂອງຄົນ, ສັດ ແລະ ພືດ ເຂົ້າ-ອອກ ປະເທດ;
- ຄວາມສ່ຽງຈາກແມງໄມ້ສັດຕູພືດ.

**ຈຸດສອບຖາມ ກ່ຽວກັບ ສຸຂານາໄມ ແລະ ສຸຂານາໄມພືດ** ໝາຍເຖິງການຈັດຕັ້ງຂອງລັດທີ່ຖືກສ້າງຕັ້ງຂຶ້ນໂດຍກະຊວງກະສິກຳ ແລະ ປ່າໄມ້ ທີ່ຖືກມອບໝາຍ ໃຫ້ຮັບຜິດຊອບ ຕອບຄຳຖາມ ແລະ ແລກປ່ຽນຂໍ້ມູນກ່ຽວກັບການຄຸ້ມຄອງ ແລະ ກວດກາທີ່ນຳໃຊ້ ມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ທັງພາກລັດ ແລະ ເອກະຊົນຢູ່ພາຍໃນ ແລະ ຕ່າງປະເທດ.
**ຈຸດປະສານງານ** ໝາຍເຖິງ ການຈັດຕັ້ງຂອງລັດ ທີ່ສ້າງຂຶ້ນໂດຍກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ກະຊວງ ກະສິກຳ ແລະ ປ່າໄມ້, ແລະ ໂດຍ ກົມອາຫານແລະຢາກະຊວງ ສາທາລະນະສຸກ ທີ່ຖືກມອບໝາຍ ໃຫ້ຊ່ວຍຈຸດສອບຖາມ.
**ຂະແໜງການອື່ນທີ່ກ່ຽວຂ້ອງ** ໝາຍເຖິງ ໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກທາງການຄ້າ ຂອງອົງການວິທະຍາສາດ ແລະ ເຕັກໂນໂລຢີແຫ່ງຊາດ ແລະ ບັນດາຂະແໜງການອື່ນໆຂອງສູນກາງ ແລະ ທ້ອງຖິ່ນ ທີ່ພົວພັນກັບການນຳໃຊ້ ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ.
**ຄວາມໂປ່ງໃສ** ໝາຍເຖິງ ການເປີດເຜີຍ ຫລື ແຈ້ງໃຫ້ຊາບ ຢ່າງບໍ່ປິດບັງ ກ່ຽວກັບ ຂໍ້ມູນຂ່າວສານຂອງບັນດາມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ທີ່ ສປປ ລາວ ກຳລັງສ້າງ, ຖືກຮັບຮອງ ແລະ ປະກາດໃຊ້ ໃຫ້ແກ່ສາທາລະນະຊົນ, ອົງການຈັດຕັ້ງ ແລະ ຜູ້ປະກອບການ ທັງຢູ່ພາຍໃນ ແລະ ຕ່າງປະເທດຮັບຮູ້ ແລະ ຄາດຄະເນໄດ້.
**ການປະເມີນຄວາມສ່ຽງ** ໝາຍເຖິງ ການປະເມີນຄວາມເປັນໄປໄດ້ ຂອງການເຂົ້າມາ, ການເກີດ ແລະ ການແຜ່ລະບາດຂອງພະຍາດຄົນ, ພະຍາດພືດ, ພະຍາດສັດ, ພະຍາດສັດສູ່ຄົນ ແລະ ຜົນກະທົບຕໍ່ສຸຂະພາບຂອງຄົນ ແລະ ສັດ ໃນການນຳໃຊ້ທາດເພີ່ມໃສ່ອາຫານຄົນ, ອາຫານສັດ, ສານຕົກຄ້າງໃນຜະລິດຕະພັນກະສິກຳ, ສິ່ງປົນເປື້ອນ, ສານພິດໃນເຄື່ອງດື່ມ ແລະ ໃນອາຫານສັດ ທັງທີ່ມີຢູ່ໃນ ສປປ ລາວ ຫຼື ອາດເກີດຂຶ້ນ ຍ້ອນການນຳເຂົ້າ ຫຼື ສົ່ງອອກ ຊຶ່ງອາດມີຜົນກະທົບທາງລົບຕໍ່ຊີວະນາໆພັນ ຫລື ເສດຖະກິດຂອງຊາດ ທີ່ຈຳເປັນຕ້ອງນຳໃຊ້ ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ເພື່ອຄຸ້ມຄອງ ແລະ ກວດກາ.

**ລະດັບການປົກປ້ອງດ້ານສຸຂານາໄມ ຫລື ສຸຂານາໄມພືດ ທີ່ເໝາະສົມ** ແມ່ນລະດັບ ທີ່ກຳນົດຂຶ້ນໂດຍອົງການຄຸ້ມຄອງວຽກງານກະສິກຳ ແລະ ປ່າໄມ້ ແລະ ສາທາລະນະສຸກ ຂອງ ສປປ ລາວ ເຊັ່ນ: ລະດັບສານຕົກຄ້າງ ຈາກຢາປາບສັດຕູພືດ, ປະລິມານທາດເພີ່ມໃນອາຫານ, ສານຕົກຄ້າງຢາປົວສັດ, ຈຳນວນເຊື້ອຈຸລິນຊີ ແລະ ອື່ນໆ ໃນອາຫານ, ເຄື່ອງດື່ມ ແລະ ຜະລິດຕະພັນກະສິກຳ ເພື່ອປົກປ້ອງຊີວິດ ຫລື ສຸຂະພາບຂອງຄົນ, ສັດ ແລະ ພືດ ບໍ່ໃຫ້ເປັນອັນຕະລາຍຈາກການຊົມໃຊ້.